ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະລາດ ວັດທະນາຖາວອນ

LALCO
LAO ASEAN LEASING PUBLIC COMPANY

ເລກທີ: 8047
ນະຄອນຫຼວງວຽງຈັນ, ວັນທີ 24/11/2022

ໜັງສືແຈ້ງເຊີນ (ເພີ່ມ)

ຮຽນ: - ທ່ານ ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
- ທ່ານ ຜູ້ອຳນວຍການໃຫຍ່ ຕະລາດຫຼັກຊັບລາວ
- ບັນດາຜູ້ຖືຮຸ້ນ ຂອງ ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ທີ່ນັບຖື.

ເລື່ອງ: ຂໍ້ມູນເພີ່ມເຕີມກ່ຽວກັບການແຈ້ງເຊີນເຂົ້າຮ່ວມພິທີຖະແຫຼງການກ່ຽວກັບການເລື່ອນຈ່າຍເງິນປັນຜົນ

- ອີງຕາມມະຕິຕົກລົງ ຂອງກອງປະຊຸມສະພາບໍລິຫານ ຂອງ ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ວັນທີ 16 ພະຈິກ 2022
- ອີງຕາມໜັງສືແຈ້ງການ ມາດຕະການການເລື່ອນຈ່າຍເງິນປັນຜົນຂອງບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ເລກທີ 1562/ຕລຊລ ວັນທີ 18 ພະຈິກ 2022

ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ("ບໍລິສັດ") ຂໍຖືເປັນກຽດຮຽນເຊີນທ່ານເຂົ້າຮ່ວມພິທີຖະແຫຼງການກ່ຽວກັບການເລື່ອນຈ່າຍເງິນປັນຜົນ ໃນວັນທີ 25 ພະຈິກ 2022 ເວລາ 11:00 ຕອນເຊົ້າ (ເລີ່ມລົງທະບຽນເວລາ 10:30) ທີ່ ບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອ ມະຫາຊົນ, ຕຶກ NNN, ຖະໜົນ ບຸລິຈັນ, ບ້ານ ໂພນສີນວນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ.

ສຳລັບທ່ານຜູ້ຖືຮຸ້ນ ຫຼື ນັກລົງທຶນທົ່ວໄປທີ່ບໍ່ສະດວກເຂົ້າຮ່ວມໂດຍກົງທີ່ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ສາມາດຮັບຊົມທາງອອນໄລໄດ້ທີ່ລິ້ງດັ່ງລຸ່ມນີ້:

https://www.facebook.com/LathLalco2015HRAdminIT?mibextid=LQQJ4d

ຫວັງຢ່າງຍິ່ງວ່າ ທ່ານຄົງສະຫຼະເວລາອັນມີຄ່າເຂົ້າຮ່ວມຄັ້ງນີ້ດ້ວຍ.

ຮຽນມາດ້ວຍຄວາມເຄົາລົບນັບຖືຢ່າງສູງ
ສະພາບໍລິຫານ

ບໍລິສັດ ລາວ ອາ ຊຽນ ເຊົ່າສິນເຊື່ອ ມະຫາຊົນ LAO ASEAN LEASING PUBLIC COMPANY

ທ່ານນາງ Yuki Scott